**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສຳນັກງານນາຍົກລັດຖະມົນຕີ** ເລກທີ 149/ນຍ

*ນະຄອນຫຼວງວຽງຈັນ, ວັນທີ 21 ສິງຫາ 2008*

# ດຳລັດ

## ວ່າດ້ວຍການສ້າງຕັ້ງ ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະສັງຄົມ

- ອີງຕາມ ໜັງສືສະເໜີ ຂອງທ່ານລັດຖະມົນຕີ ປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າ ອ.ຊ.ນ.ສ ສະບັບເລກທີ 1054/ສນຍ.ອຊນສ, ລົງວັນທີ 23 ກໍລະກົດ 2008;
- ອີງຕາມ ຄວາມຮຽກຮ້ອງຕ້ອງການຂອງວຽກງານໃນໄລຍະໃໝ່.

**ນາຍົກລັດຖະມົນຕີ ອອກດຳລັດ:**

ມາດຕາ 1. ອະນຸມັດໃຫ້ສ້າງຕັ້ງ ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ( ມີຖານະເທົ່າກົມ ) ຂຶ້ນກັບອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຕາມຄວາມເໝາະສົມ ເພື່ອປະຕິບັດໜ້າທີ່ການເມືອງໃນໄລຍະໃໝ່.

**ມາດຕາ 2.** ມອບໃຫ້ທ່ານລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກອງດັ່ງກ່າວ.

**ມາດຕາ 3.** ສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນ ແລະ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4.** ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

**ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ນາຍົກລັດຖະມົນຕີ

ບົວສອນ ບຸບຜາວັນ